**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ
ແລະ ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ 3443/ສພກ

ນະຄອນຫຼວງວຽງຈັນ, ວັນທີ 12 ເມສາ ໒໐໒໑

# ຄຳແນະນຳເພີ່ມເຕີມ

**ຮຽນ** : ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ເຄົາລົບ ແລະ ນັບຖື.
ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ທີ່ນັບຖື.

**ເລື່ອງ** : ການ ເພີ່ມທະວີ ແລະ ເອົາໃຈໃສ່ ໃນການປະຕິບັດບັນດາມາດຕະການ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະສະເຫຼີມສະຫຼອງບຸນປີໃໝ່ລາວ ຈົນເຖິງ ທ້າຍເດືອນເມສາ 2021 .

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງຫົວໜ້າ ແລະ ຮອງຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 22/ນຍ, ລົງວັນທີ 01 ເມສາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກ ວ່າດ້ວຍ ການສືບຕໍ່ປະຕິບັດມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະເດືອນເມສາ ຫາ ເດືອນພຶດສະພາ 2021, ສະບັບເລກທີ 308/ຫສນຍ, ລົງວັນທີ 31 ມີນາ 2021;
- ອີງຕາມ ການກວດພົບຜູ້ຕິດເຊື້ອໃໝ່ ຄັ້ງວັນທີ 10 ເມສາ 2021 ເຊິ່ງມີສາເຫດມາຈາກສຳຜັດໃກ້ຊິດນຳຜູ້ທີ່ລັກລອບເຂົ້າ ສປປລາວ ຈາກປະເທດທີ່ມີລາຍງານການລະບາດຮອບໃໝ່ໃນເດືອນເມສາ 2021.

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໄດ້ມີການປະເມີນຄວາມສ່ຽງຂອງຜູ້ຕິດເຊື້ອໃໝ່ກໍລະນີຢັ້ງຢືນທີ 50 ທີ່ມີປະຫວັດສຳຜັດໃກ້ຊິດກັບຜູ້ທີ່ເດີນທາງເຂົ້າມາ ສປປ ລາວ ບໍ່ຖືກກົດໝາຍ ຈາກປະເທດໃກ້ຄຽງ ທີ່ມີລາຍງານການລະບາດຮອບໃໝ່ ໃນເດືອນເມສາ 2021 ເຊິ່ງປະເທດດັ່ງກ່າວ ມີລາຍງານຜູ້ຕິດເຊື້ອໃໝ່ ໃນຊຸມຊົນ ເພີ່ມຂຶ້ນຫຼາຍຮ້ອຍຄົນຕໍ່ມື້ ແລະ ແຜ່ກະຈາຍໄປຍັງຫຼາຍແຂວງໃນຂອບເຂດທົ່ວປະເທດ, ຕໍ່ກັບສະພາບການດັ່ງກ່າວ, ທີມງານວິຊາການ ກົມຄວບຄຸມພະຍາດຕິດຕໍ່/ສູນວິເຄາະ ແລະ ລະບາດວິທະຍາ ກະຊວງສາທາລະນະສຸກ ໄດ້ສົມທົບກັບ ທີມງານພະແນກສາທາລະນະສຸກນະຄອນຫຼວງວຽງຈັນ ເພື່ອສອບສວນຜູ້ສຳຜັດໃກ້ຊິດທັງໝົດ ພ້ອມທັງ ເກັບຕົວຢ່າງມາກວດຊອກຫາເຊື້ອ COVID-19 ເຊິ່ງຜົນກວດກໍ່ໃຫ້ຜົນລົບທັງໝົດ ແຕ່ເນື່ອງຈາກຕາມປະຫວັດການເຄື່ອນ ໄຫວ ຂອງຜູ້ກ່ຽວນັ້ນອາດຈະມີບຸກຄົນທີ່ສຳຜັດໃກ້ຊິດຫຼາຍກວ່າຈຳນວນທີ່ຄົ້ນພົບໃນຂະນະນີ້.

ດັ່ງນັ້ນ, ເພື່ອເປັນການເພີ່ມທະວີການຈັດຕັ້ງປະຕິບັດ ບັນດາມາດຕະການຕ່າງໆ ໃນໄລຍະປີໃໝ່ລາວນີ້ ຈຶ່ງຂໍອອກຄຳແນະນຳເພີ່ມເຕີມ ດັ່ງລຸ່ມນີ້:

1. ສືບຕໍ່ປະຕິບັດແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ເລກທີ 308/ຫສນຍ, ລົງວັນທີ 31 ມີນາ 2021 ຢ່າງເຂັ້ມງວດ
2. ມອບໃຫ້ກະຊວງສາທາລະນະສຸກເອົາໃຈໃສ່:
   - ສົມທົບກັບຄະນະສະເພາະກິດນະຄອນຫຼວງ ສືບຕໍ່ເຝົ້າລະວັງ, ຕິດຕາມ ແລະ ຊອກຄົ້ນຫາຜູ້ສາຜັດໃກ້ຊິດ ກັບຜູ້ຕິດເຊື້ອໃໝ່ ຢ່າງເຂັ້ມງວດ;

- ກວດຄືນຄວາມພ້ອມທາງດ້ານ ບຸກຄະລາກອນ, ສະຖານທີ່ຮອງຮັບຄົນເຈັບ, ອຸປະກອນການແພດ ແລະ ຢາປິ່ນປົວ;
- ສຸມໃສ່ ປະຕິບັດແຜນການສັກຢາກັນພະຍາດ COVID-19 ໃຫ້ບັນລຸຕາມເປົ້າໝາຍ ແຕ່ນີ້ ຮອດທ້າຍເດືອນເມສາ
- ໃຫ້ສະຖານທີ່ບໍລິການສາທາລະນະສຸກ ໃນຂອບເຂດທົ່ວປະເທດ ຈັດຕັ້ງປະຕິບັດການສັກຢາກັນພະຍາດ COVID-19 ໃຫ້ແກ່ກຸ່ມເປົ້າໝາຍ ໃນໄລຍະປີໃໝ່ລາວ;

3. ມອບໃຫ້ ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ອອກແຈ້ງການປິດ ຊົ່ວຄາວ ສະຖານທີ່ບັນເທີງ, ຄາຣາໂອເກະ ແລະ ຮ້ານກິນດື່ມ ຕະຫຼອດເດືອນ ເມສາ
4. ຢຸດຊົ່ວຄາວການສ້າງສັນ, ພົວພັນແບບໃກ້ຊິດຕິດແທດ ເຊັ່ນ: ການຊຸມແຊວທີ່ບໍ່ສາມາດຮັກສາໄລຍະຫ່າງ 1 ແມັດ ແລະ ມີຄວາມສ່ຽງຕໍ່ການຕິດເຊື້ອ;
5. ຖ້າບໍ່ມີຈຳເປັນແມ່ນ ໃຫ້ຫຼີກລ່ຽງການເດີນທາງ ໃນໄລຍະບຸນປີໃໝ່ລາວ ເພື່ອຫຼີກລ່ຽງການແຜ່ລະບາດຂອງພະຍາດ
6. ມອບໃຫ້ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງທ້ອງຖິ່ນ ກວດກາຄວາມສະຫງົບ, ຕິດຕາມເຂັ້ມງວດກວດຂັນຕາມຊາຍແດນ ເພື່ອບໍ່ໃຫ້ມີການລັກລອບເຂົ້າເມືອງ;
7. ມອບໃຫ້ຄະນະສະເພາະກິດ ແຕ່ລະຂັ້ນ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ສືບຕໍ່ໂຄສະນາເຜີຍແຜ່ໃຫ້ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ເພີ່ມທະວີຄວາມເອົາໃຈໃສ່ປະຕິບັດມາດຕະການຕ່າງໆ ທີ່ຄະນະສະເພາະກິດວາງອອກໃນແຕ່ລະໄລຍະຢ່າງເຂັ້ມງວດ ເປັນຕົ້ນ ການຮັກສາໄລຍະຫ່າງ ທາງສັງຄົມ, ລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມື, ໃສ່ຜ້າອັດປາກ-ດັງ, ວັດ ອຸຫະພູມ ແລະ ອະນາໄມສະຖານທີ່. ພ້ອມນີ້ ກໍ່ໃຫ້ເປັນເຈົ້າການຕິດຕາມ ຜູ້ທີ່ເຂົ້າປະເທດເຮົາ ແບບຜິດກົດໝາຍ ແລະ ໄປເຄື່ອນໄຫວໃນຊຸມຊົນຕ່າງໆ ແລະ ແຈ້ງໃຫ້ອົງການປົກຄອງທ້ອງຖິ່ນຊາບ ເພື່ອດຳເນີນແກ້ໄຂຕາມລະບຽບການຕ່າງໆ ທີ່ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຄຳແນະນຳເພີ່ມເຕີມສະບັບນີ້ ຢ່າງເຂັ້ມງວດ.

**ລັດຖະມົນຕີ**
**ຮອງຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ,**
**ຄວບຄຸມ ແລະ ແກ້ໄຂການລະບາດ**
**ຂອງ ພະຍາດ COVID-19**

ກະຊວງສາທາລະນະສຸກ
ລັດຖະມົນຕີ

**ປອ.ດຣ. ບຸນແຝງ ພູມມະໄລສິດ**